**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

=====000=====

ກະຊວງສາທາລະນະສຸກ

ກອງເລຂາຄະນະກຳມະການປະສານງານ

ກອງທຶນໂລກຕ້ານເອດ, ວັນນະໂລກ ແລະ ໄຂ້ຍຸງ

ສປປ ລາວ

# ບົດບັນທຶກກອງປະຊຸມ

ກອງປະຊຸມຮ່ວມ ລະຫວ່າງ ຄະນະກຳມະການບໍລິຫານງານກອງທຶນໂລກ (Ex-Com) ແລະ ຄະນະກຳມະການຕິດຕາມກວດກາ (OC) ໄດ້ຈັດຂຶ້ນ ເພື່ອສົນທະນາປຶກສາຫາລືກັນພາຍໃນໝູ່ຄະນະກຳມະການ ກ່ຽວກັບແຜນວຽກຂອງ CCM ໃນປີ 2019. ກອງປະຊຸມດັ່ງກ່າວນີ້ໄດ້ຈັດຂຶ້ນໂດຍການເປັນປະທານຂອງ ທ່ານ Dr. Mark Jacobs, ຮອງປະທານຄະນະກຳມະການປະສານງານກອງທຶນໂລກ.



I. ວັນເວລາ: ວັນພະຫັດ, ທີ 31 ມັງກອນ 2019, ເວລາ 13:30 ເຖິງ 15:30.

II. ສະຖານທີ່: ຫ້ອງປະຊຸມທີ່ຊັ້ນ 3, ກະຊວງສາທາລະນະສຸກ.

III. ຜູ້ເຂົ້າຮ່ວມ:

1. ຄະນະກຳມະການບໍລິຫານງານກອງທຶນໂລກ ຈຳນວນ 03 ທ່ານ;
2. ຄະນະກຳມະການຕິດຕາມກວດກາ ຈຳນວນ 05 ທ່ານ;
3. ຜູ້ເຂົ້າຮ່ວມຈາກຫ້ອງການບໍລິຫານໂຄງການ (PR PMU), ສູນຕ້ານເອດ ແລະ ພຕພ, ສູນວັນນະໂຣກ, ສູນໄຂ້ຍຸງ ແມ່ກາຝາກ ແລະ ແມງໄມ້, ແລະ ພາກສ່ວນຕ່າງໆ ຈຳນວນ 08 ທ່ານ;
4. ກອງເລຂາຄະນະກຳມະການປະສານງານກອງທຶນໂລກ ຈຳນວນ 04 ທ່ານ.

ລວມທັງໝົດ 20 ທ່ານ.

IV. ວາລະກອງປະຊຸມ:

1. ການກະກຽມ ເພື່ອລົງຕິດຕາມກວດກາທີ່ພາກສະໜາມ;
2. ລາຍງານຄວາມຄືບໜ້າໂຄງການພາກພື້ນສຳລັບ HIV ແລະ TB;
3. ສົນທະນາປຶກສາຫາລືກ່ຽວກັບສະພາບການ ແລະ ການຈັດຕັ້ງປະຕິບັດຂອງຄະນະກຳມະການປະສານງານສາມະຄົມບໍ່ຫວັງຜົນກຳໄລ, ຜູ້ໄດ້ຮັບຜົນກະທົບຫຼັກ ແລະ ຜູ້ຕິດເຊື້ອ (NPA CC).



## V. ສະຫຼຸບສັງລວມເນື້ອໃນໂດຍຫຍໍ້ຂອງກອງປະຊຸມ:

### 1. ການກະກຽມ ເພື່ອລົງຕິດຕາມກວດກາທີ່ພາກສະໜາມ:



- ແຜນການຕິດຕາມກວດກາທີ່ພາກສະໜາມສຳລັບປີ 2019 ແມ່ນຈະໄດ້ຈັດຂຶ້ນ 02 ຄັ້ງ, ຄັ້ງທຳອິດແມ່ນໃນເດືອນກຸມພາ ແລະ ຄັ້ງທີສອງແມ່ນໃນເດືອນສິງຫາ. ສ່ວນຈຳນວນມື້ເຮັດວຽກທີ່ພາກສະໜາມ ແມ່ນໄດ້ເພີ່ມຂຶ້ນຈາກເດີມແມ່ນ 2 ວັນມາເປັນ 3 ວັນ ຊຶ່ງໄດ້ຮັບຮອງຈາກກອງທຶນໂລກແລ້ວ ເພື່ອໃຫ້ມີເວລາພຽງພໍໃນການຕິດຕາມວຽກງານໂຄງການສາມພະຍາດທີ່ເຂດຫ່າງໄກສອກຫຼີກ;
- ການຕິດຕາມກວດກາທີ່ພາກສະໜາມໃນເດືອນກຸມພາ 2019 ນີ້ ແມ່ນຈະໄດ້ໄປຕິດຕາມກວດກາວຽກງານໂຄງການສາມພະຍາດ ທີ່ແຂວງຫຼວງນ້ຳທາ ໃນລະຫວ່າງວັນທີ 18-22 ກຸມພາ 2019;
- ກອງເລຂາ CCM ຈະເປັນຜູ້ຫ້າງຫາກະກຽມ ແລະ ປະສານງານກັບທາງທ້ອງຖິ່ນສຳລັບການຕິດຕາມກວດກາທີ່ພາກສະໜາມໃນຄັ້ງນີ້.

### 2. ລາຍງານຄວາມຄືບໜ້າໂຄງການພາກພື້ນສຳລັບແຜນງານ HIV ແລະ TB:

- HIV:
  - ເນື່ອງຈາກວ່າ PR ຂອງເງິນຊ່ວຍເຫຼືອດັ່ງກ່າວນີ້ແມ່ນ AFAO ຊຶ່ງເປັນ INGO ດັ່ງນັ້ນ ຕາມຂໍ້ກຳນົດກົດລະບຽບຂອງ ສປປ ລາວ ອົງການຈັດຕັ້ງສາກົນດັ່ງກ່າວນີ້ຈະຕ້ອງໄດ້ຂໍໃບອະນຸຍາດການຈັດຕັ້ງປະຕິບັດວຽກງານ (Operational Permit) ກ່ອນຈະເຄື່ອນໄຫວວຽກງານໄດ້. ຊຶ່ງປະຈຸບັນນີ້ AFAO ແມ່ນໄດ້ກຳລັງດຳເນີນການຢູ່.



- TB:
  - ໄລຍະນີ້ແມ່ນໄດ້ລໍຖ້າ ການອະນຸມັດເງິນຊ່ວຍເຫຼືອຂອງໂຄງການພາກພື້ນສຳລັບແຜນງານ TB ຈາກກອງທຶນໂລກ;
  - ທາງ NTC ໄດ້ຮ່ວມກັບຄູ່ຮ່ວມງານ CSO ກະກຽມລາຍການຕ່າງໆທີ່ກ່ຽວຂ້ອງກັບການຈັດຊື້ຂອງແຜນງານ TB ເພື່ອສົ່ງໃຫ້ UNOPS ແລະ ພາກສ່ວນທີ່ກ່ຽວຂ້ອງເພື່ອກວດກາຄືນ;
  - ສ່ວນດ້ານວິຊາການ ທາງສູນ ແລະ ຄູ່ຮ່ວມງານ ແມ່ນກຳລັງກວດຄືນເລື່ອງຖານຂໍ້ມູນຂ່າວສານ ເພື່ອໃຫ້ມີຄວາມສອດຄ່ອງກັບຖານຂໍ້ມູນຂອງພາກພື້ນ.

### 3. ສົນທະນາປຶກສາຫາລືກ່ຽວກັບສະພາບການ ແລະ ການຈັດຕັ້ງປະຕິບັດຂອງ NPA CC :

- ທາງ NPA CC ໄດ້ຈັດກອງປະຊຸມປຶກສາຫາລືພາຍໃນຄະນະກຳມະການຂຶ້ນເພື່ອທົບທວນໂຄງຮ່າງການຈັດຕັ້ງ ແລະ ພາລະບົດບາດຂອງ NPA CC, ຜົນຈາກການປຶກສາຫາລື ເຫັນວ່າ ພາລະບົດບາດ ແມ່ນຈະຕ້ອງໄດ້ມີການດັດແກ້ຄືນໃໝ່ໃຫ້ຖືກຕ້ອງ ລວມທັງສະມາຊິກຂອງ NPA CC;
- NPA CC ບໍ່ແມ່ນສະມາຄົມ ຫຼື ອົງການຈັດຕັ້ງທາງສັງຄົມໃດໜຶ່ງ ທີ່ໄດ້ຮັບອະນຸມັດຈາກກະຊວງພາຍໃນຢ່າງເປັນທາງການ. NPA CC ເປັນພຽງໜ່ວຍງານປະສານງານພາຍໃນບັນດາສະມາຊິກ CCM ທີ່ມາຈາກອົງການຈັດຕັ້ງທາງສັງຄົມ ເທົ່ານັ້ນ;

- ພາຍຫຼັງທີ່ໄດ້ດັດແກ້ພາລະບົດບາດຂອງ NPA CC ແລ້ວ ຈະໄດ້ຈັດກອງປະຊຸມເຜີຍແຜ່ໃຫ້ແກ່ສະມາຊິກຂອງຄະນະກຳມະການຄືນໃໝ່.

ກອງປະຊຸມໄດ້ດຳເນີນໄປເປັນເວລາສອງຊົ່ວໂມງ ແລະ ໄດ້ສິ້ນສຸດລົງໃນເວລາ 15:30 ໃນຕອນບ່າຍຂອງວັນທີ 31 ມັງກອນ 2019.

ນະຄອນຫຼວງວຽງຈັນ, ວັນທີ 31/01/2011

**ຜູ້ສັງລວມເນື້ອໃນກອງປະຊຸມ**



ທ່ານ ທຸກອນ ທະລັງສີ